# ຍຸດທະສາດ ແລະ ແຜນງານ ຮອດປີ2025

1. <u>ຍຸດທະສາດພັດທະນາວຽກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຮອດປີ 2025</u>.

## 1. <u>ວຽກງານຖະແຫຼງຂ່າວ</u>

**1.1.** ພັດທະນາສື່ມວນຊົນລາວໃຫ້ມີຄຸນນະພາບ, ເປັນລະບົບ, ທັນສະໄໝ, ວ່ອງໄວ, ຊັດເຈນ ແລະ ທັນເຫດການ, ສາມາດເຂົ້າເຖິງທຸກພື້ນທີ່ໃນທົ່ວປະເທດ.

**1.2.** ສືບຕໍ່ພັດທະນາສື່ມວນຊົນລາວ ມີຄວາມຫຼາກຫຼາຍທັງຄົບຖ້ວນດ້ານເນື້ອໃນ, ເປັນແຫຼ່ງສະໜອງຂໍ້ມູນຂ່າວສານ,ການບັນເທີງ ແລະ ໃຫ້ສາລະຄວາມຮູ້ຢ່າງຮອບດ້ານໃຫ້ແກ່ ພັກ-ລັດ ແລະປະຊາຊົນບັນດາເຜົ່າທຸກຊັ້ນຄົນ.

**1.3.** ສ້າງຄວາມເຂັ້ມແຂງ ແລະ ເງື່ອນໄຂໃນການພັດທະນາກິດຈະກຳຈາກສື່ມວນຊົນ ໃຫ້ມີຄວາມຫຼາກຫຼາຍ, ຕອບສະໜອງໄດ້ຕາມຄວາມຕ້ອງການ ຂອງສັງຄົມ ພ້ອມທັງສ້າງລາຍຮັບວິຊາການ ແລະ ສາມາດກຸ້ມຕົນເອງທາງດ້ານການເງິນໃນລະດັບທີ່ແນ່ນອນ.

**1.4.** ຂະຫຍາຍຂອບເຂດການພົວພັນ, ເຊື່ອມໂຍງກັບເວທີສື່ມວນຊົນສາກົນໃຫ້ນັບມື້ກວ້າງຂວາງ, ມີຄວາມໝັ້ນຄົງຍືນຍົງ, ຮັບປະກັນຄວາມປອດໄພ ແລະ ສະຖຽນລະພາບທາງດ້ານຂໍ້ມູນຂ່າວສານ.

**1.5.** ພັດທະນາບຸກຄະລາກອນ ໃນຂະແໜງຖະແຫຼງຂ່າວໃຫ້ໄດ້ທັງປະລິມານ ແລະຄຸນນະພາບ, ໂດຍສະເພາະແມ່ນການສົ່ງເສີມບຸກຄະລາກອນໜຸ່ມ ທີ່ມີຄຸນທາດທາງດ້ານການເມືອງໜັກແໜ້ນ ແລະ ມີວຸດທິສື່ສານມວນຊົນທີ່ກ້າວໜ້າ ທີ່ສົມຄູ່ກັບຍຸກສະໄໝ.

**1.6.** ຊຸກຍູ້ການຮ່ວມມື ລະຫ່ວາງ ພາກລັດ ແລະ ພາກເອກະຊົນ, ການຮ່ວມມືກັບຕ່າງປະເທດ ໃນການສົ່ງ ເສີມການລົງທຶນ ໃນວຽກງານຖະແຫຼງຂ່າວ ໃຫ້ກວ້າງຂວາງ.

**1.7.** ຫັນການຄຸ້ມຄອງສື່ມວນຊົນໃຫ້ມີຄວາມເຂັ້ມແຂງ ແລະ ເປັນທັນສະໄໝ.

## 2. <u>ວຽກງານວັດທະນະທຳ</u>

**2.1.** ສືບຕໍ່ສົ່ງເສີມການອານຸລັກ, ປົກປັກຮັກສາ, ຟື້ນຟູ ສືບທອດ ເສີມຂະຫຍາຍມູນເຊື້ອ ແລະ ຄຸນຄ່າ ມໍລະ ດົກວັດທະນະທຳ ອັນດີງາມຂອງຊາດໃຫ້ມີຄວາມຍືນຍົງ.

**2.2.** ສົ່ງເສີມການພັດທະນາ ອະລິຍະທຳທາງດ້ານວັດຖຸ ແລະ ຈິດໃຈຂອງສັງຄົມ, ພ້ອມທັງຮັບເອົາຄຸນຄ່າວັດທະນະທຳທີ່ກ້າວໜ້າ ຂອງມວນມະນຸດຢ່າງມີການເລືອກເຟັ້ນ ແລະ ສອດຄ່ອງກັບຍຸກສະໄໝ, ສາມາດເຊື່ອມໂຍງກັບສາກົນ.

**2.3.** ປັບປຸງ ແລະ ພັດທະນາຜະລິດຕະພັນວັດທະນະທຳ ໃຫ້ມີຄວາມຫຼາກຫຼາຍ ແລະ ມີຄຸນນະພາບສູງ, ກ້າວໄປເຖິງການສ້າງເປັນອຸດສາຫະກຳ ວັດທະນະທຳໃນອານາຄົດ. ປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ຢ່າງຍືນຍົງ.

**2.4.** ໂຄສະນາ, ເຜີຍແຜ່ວຽກງານວັດທະນະທໍາອັນດີງາມ ຂອງຊາດ ອອກສູ່ສັງຄົມທັງພາຍໃນ ແລະ ຕ່າງປະເທດ, ພ້ອມທັງສະກັດກັ້ນສິ່ງຫຍໍ້ທໍ້ທາງດ້ານວັດທະນະທໍາ ທີ່ເປັນໄພຕໍ່ສັງຄົມ.

**2.5.** ພັດທະນາບຸກຄະລາກອນໃນຂົງເຂດວັດທະນະທໍາ ໃຫ້ມີຄວາມເຂັ້ມແຂງທັງປະລິມານ ແລະ ຄຸນນະພາບ.

**2.6.** ສ້າງ, ພັດທະນາພື້ນຖານໂຄງລ່າງ ໃນຂະແໜງວັດທະນະທໍາ ໃຫ້ສົມຄູ່ກັບການຂະຫຍາຍຕົວ ທາງດ້ານເສດຖະກິດ-ສັງຄົມ.

**2.7.** ຄຸ້ມຄອງບໍລິຫານ, ຕິດຕາມກວດກາ ແລະ ປະເມີນຜົນການປະຕິບັດວຽກງານ ໃນຂົງເຂດວັດທະນະທໍາ ຢ່າງເປັນລະບົບຕໍ່ເນື່ອງ.

**3.** <u>ວຽກງານທ່ອງທ່ຽວ</u>

**3.1.** ພັດທະນາການທ່ອງທ່ຽວລາວ ໃຫ້ມີຄວາມຍືນຍົງຕາມທິດ ສົ່ງເສີມການທ່ອງທ່ຽວທໍາມະຊາດ, ທ່ອງທ່ຽວວັດທະນະທໍາ ແລະ ທ່ອງທ່ຽວປະຫວັດສາດ.

**3.2.** ເຮັດໃຫ້ ສປປ ລາວ ກາຍເປັນຈຸດໝາຍປາຍທາງການທ່ອງທ່ຽວ ຂອງນັກທ່ອງທ່ຽວໃນທົ່ວໂລກ.

**3.3.** ເຊື່ອມໂຍງການທ່ອງທ່ຽວຂອງ ສປປ ລາວ ເຂົ້າກັບການທ່ອງທ່ຽວໃນລະດັບພາກພື້ນ ແລະ ສາກົນໄດ້.

**3.4.** ພັດທະນາ, ຄຸ້ມຄອງ ແລະ ສົ່ງເສີມການທ່ອງທ່ຽວ ໃຫ້ກາຍປັນຂະແໜງບູລິມາສິດອັນໜຶ່ງ, ຊ່ວຍໃຫ້ປະຊາຊົນຫຼຸດພົ້ນອອກຈາກຄວາມທຸກຍາກ ຕາມນະໂຍບາຍຂອງລັດຖະບານ.

**3.5.** ພັດທະນາບຸກຄະລາກອນ ໃນຂະແໜງການທ່ອງທ່ຽວໃຫ້ມີຄຸນນະພາບ, ສາມາດຕອບສະໜອງການບໍລິການທີ່ປະທັບໃຈແກ່ນັກທ່ອງທ່ຽວ ແລະ ສາມາດເຊື່ອມໂຍງກັບສາກົນ ເທື່ອລະກ້າວ.

**3.6.** ການພັດທະນາຜະລິດຕະພັນການທ່ອງທ່ຽວ ໜຶ່ງເມືອງໜຶ່ງຜະລິດຕະພັນ ໃນທົ່ວປະເທດ ແລະ ພັດທະ ນາສິ່ງອໍານວຍຄວາມສະດວກ ຢູ່ຈຸດເຊື່ອມຕໍ່ແຕ່ລະພາກ.

**3.7.** ສ້າງແຜນພັດທະນາແຫຼ່ງທ່ອງທ່ຽວ, ສໍາຫຼວດ,ຈັດສັນແຫຼ່ງທ່ອງທ່ຽວ, ປັບປຸງ ແລະ ພັດທະນາ ສະຖານທີ່ທ່ອງທ່ຽວໃຫ້ມີຄຸນນະພາບ, ມີການບໍລິການແບບຄົບວົງຈອນ ແລະ ສາມາດເຊື່ອມໂຍງກັບສາກົນ.

**3.8.** ກໍ່ສ້າງສິ່ງອໍານວຍຄວາມສະດວກ ໃນແຫຼ່ງທ່ອງທ່ຽວ, ປັກຫຼັກໝາຍ ຂອບເຂດແຫຼ່ງທ່ອງທ່ຽວ ໃນທົ່ວປະເທດ ແລະ ສ້າງຫ້ອງຂໍ້ມູນຂ່າວສານການທ່ອງທ່ຽວ ພ້ອມທັງປະກອບອຸປະກອນໃຫ້ຄົບຖ້ວນ, ເປັນລະບົບ ແລະ ທັນສະໄໝຢູ່ແຕ່ລະດ່ານສາກົນ.

**3.9.** ສ້າງ, ປັບປຸງບັນດານິຕິກໍາ, ມາດຕະຖານການທ່ອງທ່ຽວ ແລະ ເຜີຍແຜ່ ບັນດານິຕິກໍາຂະແໜງການທ່ອງທ່ຽວ ໃຫ້ໄດ້ໃນຂອບເຂດທົ່ວປະເທດ.

**3.10.** ສົ່ງເສີມໃຫ້ມີການລົງທຶນໃນຂະແໜງການທ່ອງທ່ຽວ ແລະ ຄຸ້ມຄອງການລົງທຶນໃຫ້ແທດເໝາະກັບການຂະຫຍາຍຕົວ ຂອງເສດຖະກິດ-ສັງຄົມ ໃນຂອບເຂດທົ່ວປະເທດ.

**3.11.** ຈັດລະດັບມາດຕະຖານ ແລະ ປະເພດ ໃຫ້ບັນດາຫົວໜ່ວຍທຸລະກິດ ການບໍລິການ ໃນຂະແໜງການ ທ່ອງທ່ຽວ ໃຫ້ໄດ້ໃນຂອບເຂດທົ່ວປະເທດ.

**3.12.** ເຮັດໃຫ້ການຄຸ້ມຄອງບັນດາ ກິດຈະການທຸລະກິດທ່ອງທ່ຽວ ແລະ ການບໍລິການໃນຂະແໜງການທ່ອງທ່ຽວແທດເໝາະກັບສະພາບການ ຂະຫຍາຍຕົວຂອງການທ່ອງທ່ຽວ, ສະກັດກັ້ນປະກົດການຫຍໍ້ທໍ້ ແລະ ຜົນກະທົບທາງລົບ ທີ່ອາດຈະເກີດຂຶ້ນໃນຂະແໜງການທ່ອງທ່ຽວ ໃນຂອບເຂດທົ່ວປະເທດ.

**3.13.** ພັດທະນາຊັບພະຍາກອນມະນຸດ ໃນຂະແໜງທ່ອງທ່ຽວ ໃຫ້ມີຄວາມສາມາດ, ປັບປຸງຫຼັກສູດການຮຽນການສອນ ໃຫ້ເຊື່ອມໂຍງກັບສາກົນເທື່ອລະກ້າວ, ສ້າງເຄືອຄ່າຍການປະສານງານພາກລັດ, ເອກະຊົນ, ສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນການສຶກສາ ໃນຂະແໜງການທ່ອງທ່ຽວ ແລະ ຍົກລະດັບຄຸນນະພາບ ວິຊາຊີບ ໃນຂະແໜງການທ່ອງທ່ຽວ ໃຫ້ໄດ້ມາດຖານສາກົນ.

**4. <u>ວຽກງານເສນາທິການ</u>**

**4.1.** ພັດທະນາການຄຸ້ມຄອງວຽກງານບໍລິຫານ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃຫ້ເປັນລະບົບ.

**4.2.** ປັບປຸງກົງຈັກການຈັດຕັ້ງ ຂອງກະຊວງໃຫ້ມີຄວາມເຂັ້ມແຂງ ແລະ ເປັນລະບົບ.

**4.3.** ກໍ່ສ້າງ ແລະ ພັດທະນາບຸກຄະລາກອນ ໃຫ້ມີຄວາມເຂັ້ມແຂງທາງດ້ານຄຸນສົມບັດ ແລະ ຄວາມສາມາດ.

**4.4.** ດຶງດູດການລົງທຶນໃຫ້ເພີ່ມຂຶ້ນ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດ ແຜນພັດທະນາ ໃນທົ່ວຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃຫ້ມີປະສິດທິຜົນ ແລະ ຖືກຕ້ອງຕາມລະບຽບກົດໝາຍ.

**4.5.** ເປີດກວ້າງການຮ່ວມມື, ແລກປ່ຽນ ແລະ ເຊື່ອມໂຍງກັບສາກົນ ໃນວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

**4.6.** ຕິດຕາມ, ກວດກາ, ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານ ຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃຫ້ເປັນລະບົບ, ຖືກຕ້ອງຕາມລະບຽບກົດໝາຍ.

## IV. ບັນດາແຜນງານຈຸດສຸມເພື່ອພັດທະນາວຽກງານຖະແຫຼງຂ່າວ,ວັດທະນະທຳແລະທ່ອງທ່ຽວ 10 ປີ 2016-2025.

**1. <u>ວຽກງານຖະແຫຼງຂ່າວ</u>:**

**ຄາດຄະເນ ວຽກງານຖະແຫຼງຂ່າວ ແຕ່ປີ 2016-2025. ປະກອບມີ 22 ແຜນງານຈຸດສຸມ.**

**1.1. ເພື່ອບັນລຸຍຸດທະສາດໃນການພັດທະນາ ພາຫານະສື່ມວນຊົນ ໃຫ້ມີຄຸນນະພາບ,ເປັນລະບົບ,ທັນສະໄໝ, ວ່ອງໄວ ແລະ ທັນເຫດການ, ປະກອບມີ 5 ແຜນງານຈຸດສຸມດັ່ງນີ້:**

1.1.1. ດຳເນີນການພັດທະນາ ແລະ ປັບປຸງ ວັດຖຸອຸປະກອນເຕັກນິກວິທະຍຸ, ໂທລະພາບ ຈາກລະບົບອານາລັອກໄປສູ່ລະບົບດີຈີຕ໋ອນໃຫ້ເປັນລະບົບຄົບຊຸດ, ທັນສະໄໝ ໃນຂອບເຂດທົ່ວປະເທດ ແລະ ສາມາດເຊື່ອມໂຍງກັບສາກົນ.

1.1.2. ປັບປຸງ ແລະ ຍົກລະດັບພື້ນຖານວັດຖຸອຸປະກອນເຕັກນິກ ຮັບໃຊ້ການຜະລິດຂ່າວ ທາງໂທລະພາບ, ວິທະຍຸ, ໜັງສືພິມ ແບບໃໝ່ໃຫ້ເປັນລະບົບຄົບຊຸດ ເຮັດໃຫ້ການກະຈາຍຂ່າວສານໄດ້ທົ່ວເຖິງທຸກພື້ນທີ່.

1.1.3. ສ້າງພື້ນຖານໂຄງລ່າງ ທາງດ້ານຖະແຫຼງຂ່າວສື່ມວນຊົນ ໃຫ້ເປັນລະບົບຄົບຊຸດ ນັບແຕ່ສູນກາງ ຈົນຮອດທ້ອງຖິ່ນ, ເຂດພື້ນຖານ ຫ່າງໄກສອກຫຼີກໃຫ້ຮັບສັນຍານດາວທຽມໄດ້ທົ່ວປະເທດ (ສ້າງ ແລະ ຂະຫຍາຍເຄືອຄ່າຍ ຮັບ-ສົ່ງສັນຍານ ວິທະຍຸ-ໂທລະພາບ).

1.1.4. ພັດທະນາລະບົບປະສານງານ ໃນການຮັບສົ່ງຂໍ້ມູນຂ່າວສານ ລະຫວ່າງສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄວາມຄ່ອງຕົວ ແລະ ປອດໄພ.

1.1.5. ພັດທະນາລະບົບ ຮັບ-ສົ່ງ ຂໍ້ມູນສື່ສິ່ງພິມໃຫ້ທ້ອງຖິ່ນ ແລະ ສ້າງລະບົບການຈັດພິມຂະໜາດນ້ອຍ ເພື່ອຈຳໜ່າຍໃຫ້ທ້ອງຖິ່ນ ໂດຍສະເພາະບັນດາເມືອງ.

**1.2. ເພື່ອບັນລຸຍຸດທະສາດໃນການສືບຕໍ່ສ້າງໃຫ້ສື່ມວນຊົນລາວ ເປັນກະບອກສຽງອັນແຫຼມຄົມ ຂອງພັກ-ລັດ ທັງລວງເລິກ ແລະ ລວງກ້ວາງ, ມີຄວາມຫຼາກຫຼາຍທັງຄົບຖ້ວນ ດ້ານເນື້ອໃນ, ເປັນແຫຼ່ງສະໜອງຂໍ້ມູນຂ່າວສານ ແລະ ໃຫ້ສາລະຄວາມຮູ້ຢ່າງຮອບດ້ານ, ປະກອບມີ 4 ແຜນງານຈຸດສຸມດັ່ງນີ້:**

1.2.1. ປັບປຸງເນື້ອໃນຂ່າວ ແລະ ຂະຫຍາຍຊ່ອງໂທລະພາບ, ວິທະຍຸ, ໜັງສືພິມ ໃຫ້ມີຄວາມຫຼາກຫຼາຍ, ວ່ອງໄວ ແລະ ທັນເຫດການ.

1.2.2. ປັບປຸງ ແລະ ຍົກລະດັບຄວາມຮູ້ຄວາມສາມາດ ຂອງບັນດານັກຂ່າວ, ໂຄສົກ ຫຼື ຜູ້ລາຍງານຂ່າວ ໃຫ້ໄດ້ຕາມມາດຖານສາກົນ ແລະ ເພີ່ມຈຳນວນນັກຂ່າວ, ໂຄສົກ ຂຶ້ນໃຫ້ໄດ້ຕາມຄວາມຕ້ອງການຂອງວຽກງານຂ່າວ.

1.2.3. ປັບປຸງເນື້ອໃນສື່ສານມວນຊົນຂອງ ໂທລະພາບ, ວິທະຍຸ, ໜັງສືພິມແບບໃໝ່ ໃຫ້ມີຄວາມຫຼາກຫຼາຍ.

1.2.4. ນຳເອົາແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ, ສາລະໜ້າຮູ້ ແລະ ການບັນເທີງຜ່ານພາຫະນະສື່ມວນຊົນ ລົງສູ່ປະຊາຊົນຢ່າງທົ່ວເຖິງ.

**1.3. ເພື່ອບັນລຸຍຸດທະສາດສ້າງຄວາມເຂັ້ມແຂງ ແລະ ເງື່ອນໄຂໃນການພັດທະນາກິດຈະກຳ ຈາກສື່ມວນຊົນໃຫ້ມີຄວາມຫຼາກຫຼາຍ, ຕອບສະໜອງໄດ້ຕາມຄວາມຕ້ອງການຂອງສັງຄົມ ພ້ອມທັງສ້າງລາຍໄດ້ຈາກລາຍຮັບວິຊາການ ແລະ ສາມາດກຸ້ມຕົນເອງ ທາງດ້ານການເງິນເທື່ອລະກ້າວ, ປະກອບມີ 4 ແຜນງານຈຸດສຸມດັ່ງນີ້:**

1.3.1. ສ້າງເຄືອຄ່າຍສື່ມວນຊົນ, ພັດທະນາລາຍການໂທລະພາບ ໃຫ້ມີຄວາມຫຼາກຫຼາຍເພື່ອດຶງດູດຄວາມສົນໃຈຂອງ ມວນຊົນທັງ ພາຍໃນ ແລະ ຕ່າງປະເທດ.

1.3.2. ປັບປຸງ, ເປີດກ້ວາງຕະຫຼາດສື່ມວນຊົນລາວໃຫ້ກວ້າງຂວາງ ໂດຍການພັດທະນາຜະລິດຕະພັນສື່ມວນຊົນໃຫ້ມີຄວາມຫຼາກຫຼາຍ, ທັນສະໄໝ.

1.3.3. ສ້າງກິດຈະກຳທາງດ້ານສື່ມວນຊົນໃຫ້ມີຄວາມຫຼາກຫຼາຍ ທັງພາຍໃນ ແລະ ຕ່າງປະເທດ ເພື່ອໂຄສະນາສື່ມວນຊົນລາວ ໃນເວທີສາກົນ.

1.3.4. ເພີ່ມທະວີການຊອກແຫຼ່ງລາຍຮັບ ດ້ວຍການນຳໃຊ້ທຸກທ່າແຮງທີ່ມີ ໃຫ້ນັບມື້ຫຼາຍຂຶ້ນ, ປັບປຸງກົນໄກ, ນະໂຍບາຍໃນການຄຸ້ມຄອງ ແລະ ການບໍລິຫານທາງດ້ານການເງິນ ໃຫ້ສອດຄ່ອງກັບຄວາມຕ້ອງການໃນການຜະລິດ ແລະ ຖືກຕ້ອງຕາມລະບຽບກົດໝາຍ.

**1.4. ເພື່ອບັນລຸຍຸດທະສາດຂະຫຍາຍຂອບເຂດການພົວພັນ, ເຊື່ອມໂຍງກັບເວທີ ສື່ມວນຊົນສາກົນ ໃຫ້ນັບມື້ນັບກວ້າງຂວາງ,ມີຄວາມໝັ້ນຄົງຍືນຍົງ, ຮັບປະກັນຄວາມປອດໄພ ແລະ ສະຖຽນລະພາບທາງດ້ານ ຂໍ້ມູນຂ່າວສານ, ປະກອບມີ 3 ແຜນງານຈຸດສຸມດັ່ງນີ້:**

1.4.1. ສ້າງເຄືອຄ່າຍປະສານງານ ເພື່ອເຊື່ອມໂຍງດ້ານການຂ່າວ, ດ້ານຖະແຫຼງຂ່າວສື່ມວນຊົນຂອງປະເທດໃນລະດັບອານຸພາກພື້ນ, ອາຊຽນ ແລະ ລະດັບໂລກ.

1.4.2. ຊຸກຍູ້ການຈັດຕັ້ງປະຕິບັດສັນຍາຮັບຮູ້ເຊິ່ງກັນ ແລະ ກັນ ກ່ຽວກັບວຽກງານຖະແຫຼງຂ່າວ.

1.4.3. ສ້າງກິດຈະກຳ ໃນຂົງເຂດວຽກງານຖະແຫຼງຂ່າວ ເພື່ອໂຄສະນາຜະລິດຕະພັນ ຂອງຂະແໜງການທັງພາຍໃນ ແລະ ຕ່າງປະເທດ.

**1.5. ເພື່ອບັນລຸຍຸດທະສາດພັດທະນາບຸກຄະລາກອນ ໃນຂະແໜງຖະແຫຼງຂ່າວ ໃຫ້ມີທັງປະລິມານ ແລະ ຄຸນນະພາບ, ໂດຍສະເພາະແມ່ນການສົ່ງເສີມບຸກຄະລະກອນໜຸ່ມ ທີ່ມີຄຸນທາດທາງດ້ານການເມືອງໜັກແໜ້ນ ແລະ ມີລະດັບເຕັກນິກ ວິຊາການສື່ ທີ່ສົມຄູ່ກັບຍຸກສະໄໝ, ປະກອບມີ 2 ແຜນງານຈຸດສຸມດັ່ງນີ້:**

1.5.1. ພັດທະນາບຸກຄະລະກອນ ໃນຂົງເຂດວຽກງານຖະແຫຼງຂ່າວ, ສື່ມວນຊົນ ຂອບເຂດທົ່ວປະເທດ.

1.5.2. ປັບປຸງ ແລະ ພັດທະນາໂຄງລ່າງພື້ນຖານ ທາງດ້ານຖະແຫຼງຂ່າວສື່ມວນຊົນ.

**1.6. ເພື່ອບັນລຸຍຸດທະສາດສົ່ງເສີມການຮ່ວມມື ລະຫວ່າງ ພາກລັດແລະພາກເອກະຊົນ,ການຮ່ວມມືກັບຕ່າງປະເທດໃນການສົ່ງເສີມການລົງທຶນໃນວຽກງານຖະແຫຼງຂ່າວໃຫ້ກ້ວາງຂວາງ, ປະກອບມີ 2 ແຜນງານຈຸດສຸມດັ່ງນີ້:**

1.6.1. ສ້າງເຄືອຄ່າຍປະສານງານສື່ມວນຊົນລະຫວ່າງພາກລັດ-ເອກະຊົນ ແລະ ເຄືອຄ່າຍປະສານງານ ລະຫວ່າງ ສື່ມວນຊົນພາຍໃນ ກັບຕ່າງປະເທດ ເພື່ອໂຄສະນາດ້ານຂໍ້ມູນຂ່າວສານໃຫ້ກວ້າງຂວາງ ແລະ ດຶງດູດ ການຊ່ວຍເຫຼືອຈາກຕ່າງປະເທດ.

1.6.2. ສ້າງເຄືອຄ່າຍປະສານງານ ດ້ານສື່ມວນຊົນຢູ່ໃນແຕ່ລະຂະແໜງການ ຂັ້ນສູນກາງ ແລະ ທ້ອງຖິ່ນໃນຂອບເຂດທົ່ວປະເທດ.

**1.7. ເພື່ອບັນລຸຍຸດທະສາດປັບປຸງ ແລະ ສ້າງບັນດານິຕິກຳທາງດ້ານກົດໝາຍໃນວຽກງານຖະແຫຼງຂ່າວໃຫ້ຄົບຖ້ວນເຮັດໃຫ້ການຄຸ້ມຄອງຂະແໜງການ ມີຄວາມເຂັ້ມແຂງ ແລະ ຮັດກຸມ, ປະກອບມີ 2 ແຜນງານຈຸດສຸມດັ່ງນີ້:**

1.7.1. ປັບປຸງບັນດາກົດໝາຍ ແລະ ນິຕິກຳ ໃນຂົງເຂດວຽກງານຖະແຫຼງຂ່າວ ທີ່ມີແລ້ວໃຫ້ມີຄວາມຫັດກຸມ ແລະ ແທດເໝາະກັບຄວາມຮຽກຮ້ອງຕ້ອງການ ຂອງວຽກງານໃນແຕ່ລະໄລຍະ, ຄົ້ນຄວ້າສ້າງກົດໝາຍ ແລະ ນິຕິກຳ ທີ່ບໍ່ທັນມີໃນຂົງເຂດວຽກງານຖະແຫຼງຂ່າວໃຫ້ຄົບຖ້ວນ.

1.7.2. ເຜີຍແຜ່ບັນດາກົດໝາຍ ແລະ ນິຕິກຳໃນຂົງເຂດວຽກງານຖະແຫຼງຂ່າວ ໃຫ້ທົ່ວເຖິງທັງພາຍໃນ ແລະ ຕ່າງປະເທດ.

**2. <u>ວຽກງານວັດທະນະທຳ</u>:**

**ຄາດຄະເນ ວຽກງານວັດທະນະທຳ ແຕ່ປີ 2016-2025. ປະກອບມີ 26 ແຜນງານຈຸດສຸມ.**

**2.1. ເພື່ອບັນລຸຍຸດທະສາດ ສືບຕໍ່ສົ່ງເສີມການອະນຸລັກ,ປົກປັກຮັກສາ,ຟື້ນຟູສືບທອດ,ເສີມຂະຫຍາຍມູນເຊື້ອ ແລະ ຄຸນຄ່າມໍລະດົກທາງດ້ານວັດທະນະທຳອັນດີງາມຂອງຊາດ ໃຫ້ມີຄວາມ ຍືນຍົງ, ປະກອບມີ 6 ແຜນງານຈຸດສຸມດັ່ງນີ້:**

2.1.1.ປູກຈິດສຳນຶກໃຫ້ທຸກຄົນໃນສັງຄົມຮັບຮູ້, ເຂົ້າໃຈຄວາມ**ໝາຍ**ຄວາມສຳຄັນ ຂອງວຽກງານວັດທະນະທຳດ້ານຕ່າງໆ.

2.1.2. ສຶກສາຄົ້ນຄວ້າວິໄຈ, ອະນຸລັກຮັກສາ ແລະ ວາງແຜນພັດທະນາ, ຄຸ້ມຄອງວັດທະນະທຳລາວທຸກຂະ ແຫນງການໃຫ້ເປັນລະບົບ.

2.1.3. ສ້າງຖານຂໍ້ມູນ, ສະຖິຕິທາງດ້ານວັດທະນະທຳປະເພດຕ່າງໆ ໄວ້ເປັນຄັງສາງມໍລະດົກທາງດ້ານວັດທະ ນະທຳ ຂອງຊາດ.

2.1.4. ຮ່ວມມື, ປະສານງານຢ່າງແຂງແຮງ ລະຫວ່າງ ພາກລັດ ແລະ ເອກະຊົນ ໃນການເຄື່ອນໄຫວວຽກງານວັດທະນະທຳ ໃຫ້ສອດຄ່ອງ ແລະ ທັນໄປສູ່ທັນສະໄໝ.

2.1.5. ສ້າງ ແລະ ພັດທະນາບ້ານວັດທະນະທຳ ໃຫ້ເປັນລະບົບ ແລະ ໄດ້ຕາມມາດຖານ.

2.1.6. ຊຸກຍູ້ ແລະ ສ້າງເງື່ອນໄຂ ໃຫ້ວັດທະນະທຳທາງດ້ານວັດຖຸ ແລະ ບໍ່ເປັນວັດຖຸ ລະດັບທ້ອງຖິ່ນກ້າວໄປສູ່ການຈົດທະບຽນ ມໍລະດົກແຫ່ງຊາດ ແລະ ສ້າງເງື່ອນໄຂເພື່ອນຳສະເໜີເຂົ້າເປັນມໍລະດົກໂລກ.

**2.2. ເພື່ອບັນລຸຍຸດທະສາດສົ່ງເສີມ, ພັດທະນາ ອະລິຍະທຳທາງດ້ານວັດຖຸ ແລະ ຈິດໃຈ ຂອງສັງຄົມ, ພ້ອມທັງຮັບເອົາ ຄຸນຄ່າວັດທະນະທຳ ທີ່ກ້າວໜ້າຂອງມວນມະນຸດ ຢ່າງມີການເລືອກເຟັ້ນ ແລະ ສອດຄ່ອງກັບຍຸກສະໄໝ ສາມາດເຊື່ອມໂຍງກັບສາກົນ, ປະກອບມີ 3 ແຜນງານຈຸດສຸມຄື ດັ່ງນີ້:**

2.2.1. ເປີດກວ້າງການຮ່ວມມືແລກປ່ຽນວັດທະນະທຳ ກັບພາກພື້ນ ແລະ ສາກົນ.

2.2.2. ປັບປຸງ, ສົ່ງເສີມ ແລະ ຄຸ້ມຄອງວັດທະນະທຳ ໃຫ້ສອດຄ່ອງກັບສະພາບຈຸດພິເສດ ຂອງທ້ອງຖິ່ນ ແລະ ຂອງຊາດ.

3.2.3. ສ້າງ, ສົ່ງເສີມ ສັງຄົມການອ່ານ ໃຫ້ເຂົ້າຢູ່ໃນຊີວິດປະຈຳວັນ ຂອງຄົນລາວ.

**2.3. ເພື່ອບັນລຸຍຸດທະສາດປັບປຸງ ແລະ ພັດທະນາ ຜະລິດຕະພັນວັດທະນະທຳ ໃຫ້ມີຄວາມຫຼາກຫຼາຍ ແລະ ມີຄຸນນະພາບສູງ ກ້າວໄປເຖິງການສ້າງເປັນອຸດສາຫະກຳວັດທະນະທຳໃນອະນາຄົດ, ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ຢ່າງຍືນຍົງ, ປະກອບມີ 4 ແຜນງານຈຸດສຸມ ດັ່ງນີ້:**

2.3.1. ສ້າງ ແລະ ປັບປຸງຜະລິດຕະພັນວັດທະນະທຳ ໃຫ້ມີຄວາມ**ຫຼາກຫຼາຍ.**

2.3.2. ເປີດກວ້າງ ແລະ ສົ່ງເສີມຕະຫຼາດຜະລິດຕະພັນວັດທະນະທຳ ຢູ່ພາຍໃນ ແລະ ຕ່າງປະເທດ, ສ້າງ ຄວາມເຂັ້ມແຂງໃຫ້ຂະແໜງວັດທະນະທຳເພື່ອສ້າງແຫຼ່ງລາຍຮັບ ແລະ ສາມາດກຸ້ມຕົນເອງ ເທື່ອລະກ້າວ.

2.3.3. ສົ່ງເສີມການປະດິດຄິດແຕ່ງທາງດ້ານວັດທະນະທຳ ແລະ ສະໜັບສະໜູນຫົວຄິດປະດິດສ້າງທາງດ້ານ ພູມປັນຍາຊາວບ້ານ (ທ້ອງຖິ່ນ) ທາງດ້ານວັດທະນະທຳ.

2.3.4. ສ້າງ ໜຶ່ງເມືອງ ໜຶ່ງຜະລິດຕະພັນ ທາງດ້ານວັດທະນະທຳ.

**2.4. ເພື່ອບັນລຸຍຸດທະສາດໂຄສະນາ ແລະ ເຜີຍແຜ່ອອກສູ່ສັງຄົມ ທັງພາຍໃນ ແລະ ຕ່າງປະເທດ, ພ້ອມທັງສະກັດກັ້ນສິ່ງຫຍໍ້ທໍ້ທາງດ້ານວັດທະນະທຳ ທີ່ເປັນໄພຕໍ່ສັງຄົມ, ປະກອບມີ 3 ແຜນງານຈຸດສຸມ ຄືດັ່ງນີ້:**

2.4.1. ໂຄສະນາເຜີຍແຜ່ ວຽກງານວັດທະນະທຳຂອງຊາດ ຜ່ານບັນດາພາຫະນະສື່ມວນຊົນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ.

2.4.2. **ເຂົ້າຮ່ວມ ແລະ ຈັດງານວາງສະແດງວາລະສານ, ປຶ້ມ, ສິ່ງພິມ, ຮູບແຕ້ມຈິດຕະກຳ, ຮູບເງົາ, ວີດີໂອ... ແລະ ຜະລິກຕະພັນຂະແໜງການຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ.**

2.4.3. ສົມທົບກັບທ້ອງຖິ່ນ ແລະ ພາກທຸລະກິດ ຈັດງານບຸນເທດສະການ, ງານບຸນປະເພນີທີ່ສຳຄັນປະຈຳທ້ອງຖິ່ນ ເພື່ອໂຄສະນາການອະນຸລັກຮັກສາວັດທະນະທຳ.

**2.5. ເພື່ອບັນລຸຍຸດທະສາດພັດທະນາບຸກຄະລາກອນ ໃນຂົງເຂດວັດທະນະທຳໃຫ້ມີຄວາມເຂັ້ມແຂງ ທັງປະລິ ມານ ແລະ ຄຸນນະພາບ, ປະກອບມີ 6 ແຜນງານຈຸດສຸມດັ່ງນີ້:**

2.5.1. ສ້າງ ແລະພັດທະນາບຸກຄະລາກອນ ນັກວິຊາການທາງດ້ານວັດທະນະທຳ ໃຫ້ມີຄວາມຮູ້ຄວາມສາມາດ.

2.5.2. ທັດສະນະສຶກສາ ແລະ ແລກປ່ຽນບົດຮຽນວຽກງານວັດທະນະທຳ ທັງພາຍໃນ ແລະ ຕ່າງປະເທດ.

2.5.3. ສົ່ງເສີມບົດບາດ, ຍົກສູງປະສິດທິພາບໃນການສິດສອນ ແລະ ພັດທະນາບຸກຄະລາກອນຄູສອນ ດ້ານວັດທະນະທຳ.

2.5.4. ສ້າງແລະປັບປຸງຫຼັກສູດການຮຽນ-ການສອນດ້ານວັດທະນະທຳ ໃນລະບົບຊັ້ນສູງ, ປະລິນຍາຕີ, ປະລິນຍາໂທ ແລະ ຫຼັກສູດຝຶກອົບຮົມໄລຍະສັ້ນ.

2.5.5. ສົ່ງເສີມບົດບາດ ຍິງ-ຊາຍ ແລະ ການມີສ່ວນຮ່ວມ ຂອງສັງຄົມໃນການສ້າງຄວາມເຂັ້ມແຂງ ທາງດ້ານວັດທະນະທຳ.

2.5.6. ສ້າງ, ສົ່ງເສີມ ແລະ ພັດທະນາຜູ້ສືບທອດ ທີ່ມີພອນສະຫວັນບົ່ມຊ້ອນດ້ານວັດທະນະທຳ ໃນກຸ່ມຊາວໜຸ່ມ, ນັກຮຽນ, ນັກສຶກສາ, ປັນຍາຊົນ.

**2.6. ເພື່ອບັນລຸຍຸດທະສາດໃນການສ້າງ ແລະ ພັດທະນາພື້ນຖານໂຄງລ່າງ ໃນຂະແໜງວັດທະນະທຳ ໃຫ້ສົມຄູ່ ກັບການຂະຫຍາຍຕົວ ທາງດ້ານເສດຖະກິດ-ສັງຄົມ, ປະກອບມີ 2 ແຜນງານຈຸດສຸມ ຄືດັ່ງນີ້:**

2.6.1. ສ້າງ, ປັບປຸງ ແລະ ພັດທະນາພື້ນຖານໂຄງລ່າງດ້ານວັດທະນະທຳ ໃຫ້ມີຄວາມເຂັ້ມແຂງ, ເປັນລະບົບຄົບຊຸດ ນັບແຕ່ສູນກາງຮອດທ້ອງຖິ່ນ.

2.6.2. ປະກອບອຸປະກອນເຕັກນິກທັນສະໄໝ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານວິຊາສະເພາະ ແລະ ຄຸ້ມຄອງບໍລິຫານດ້ານວັດທະນະທຳ ໃຫ້ແກ່ຂະແໜງການວັດທະນະທຳ.

**2.7. ເພື່ອບັນລຸຍຸດທະສາດການຄຸ້ມຄອງບໍລິຫານ, ຕິດຕາມ ກວດກາ ແລະ ປະເມີນຜົນ ການປະຕິບັດວຽກງານໃນຂົງເຂດວັດທະນະທຳ ຢ່າງເປັນລະບົບຕໍ່ເນື່ອງ, ປະກອບມີ 2 ແຜນງານຈຸດສຸມ ດັ່ງນີ້:**

2.7.1. ສ້າງ, ປັບປຸງບັນດາກົດໝາຍ ແລະ ນິຕິກຳໃນຂົງເຂດວັດທະນະທຳ ໃຫ້ຄົບຖ້ວນ.

2.7.2. ເຜີຍແຜ່ບັນດາກົດໝາຍ ແລະ ນິຕິກຳໃນຂົງເຂດວັດທະນະທຳ ທຸກຂະແໜງການໃຫ້ທົ່ວເຖິງ.

**3. <u>ວຽກງານທ່ອງທ່ຽວ</u>:**

**ຄາດຄະເນ ວຽກງານທ່ອງທ່ຽວ ແຕ່ປີ 2016-2025. ປະກອບມີ 52 ແຜນງານຈຸດສຸມ.**

**3.1. ເພື່ອບັນລຸຍຸດທະສາດ ໃນການພັດທະນາການທ່ອງທ່ຽວລາວ ໃຫ້ມີຄວາມຍືນຍົງຕາມທິດສົ່ງເສີມການ ທ່ອງທ່ຽວທຳມະຊາດ, ທ່ອງທ່ຽວວັດທະນະທຳ ແລະ ທ່ອງທ່ຽວປະຫວັດສາດ, ປະກອບມີ 6 ແຜນງານຈຸດສຸມດັ່ງນີ້:**

3.1.1. ປັບປຸງແຜນຍຸດທະສາດ ພັດທະນາການທ່ອງທ່ຽວ ຂອງ ສປປ ລາວ ໃຫ້ສອດຄ່ອງກັບສະພາບຈຸດພິ ເສດ ຂອງ ສປປ ລາວ ແລະ ສາມາດເຊື່ອມໂຍງກັບສາກົນໄດ້.

3.1.2. ຕິດຕາມ, ປະເມີນຜົນການຈັດຕັ້ງປະຕິບັດບັນດາແຜນງານ ແລະ ໂຄງການພັດທະນາການທ່ອງທ່ຽວໃນຂອບເຂດທົ່ວປະເທດ.

3.1.3. ສ້າງບົດວິໄຈທາງດ້ານການທ່ອງທ່ຽວ ເພື່ອເປັນບ່ອນອີງ ແລະ ຕອບສະໜອງຂໍ້ມູນ ທີ່ມີເນື້ອໃນຄົບ ຖ້ວນ ແລະ ຊັດເຈນກ່ຽວກັບວຽກງານພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ ຂອງ ສປປ ລາວ.

3.1.4. ຈັດກິດຈະກຳສົ່ງເສີມການທ່ອງທ່ຽວ ທີ່ຕິດພັນກັບການໂຄສະນາການທ່ອງທ່ຽວ ທາງດ້ານທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ ໃຫ້ສາມາດເຂົ້າເຖິງກຸ່ມຕະຫຼາດນັກທ່ອງທ່ຽວ ທີ່ເປັນເປົ້າໝາຍ ທັງຢູ່ພາຍໃນ ແລະ ຕ່າງປະເທດ.

3.1.5. ສົ່ງເສີມການອະນຸລັກ, ນຳໃຊ້ ແລະ ພັດທະນາຊັບພະຍາກອນການທ່ອງທ່ຽວຢ່າງປະຢັດ, ມີປະສິດທິ ພາບ ແລະ ເປັນມິດກັບສິ່ງແວດລ້ອມ.

3.1.6. ສົມທົບກັບບັນດາແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຄຸ້ມຄອງບັນດາແຫຼ່ງທ່ອງທ່ຽວ ຕາມ ການແບ່ງຂັ້ນຄຸ້ມຄອງ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ.

**3.2. ເພື່ອບັນລຸຍຸດທະສາດເຮັດໃຫ້ ສປປ ລາວ ກາຍເປັນຈຸດໝາຍປາຍທາງການທ່ອງທ່ຽວ ຂອງນັກທ່ອງທ່ຽວໃນທົ່ວໂລກ, ປະກອບມີ 4 ແຜນງານຈຸດສຸມດັ່ງນີ້:**

3.2.1. ຈັດຕັ້ງປະຕິບັດຍຸດທະສາດ ພັດທະນາແຫຼ່ງທ່ອງທ່ຽວຢ່າງມີຈຸດສຸມ, ພັດທະນາຜະລິດຕະພັນການທ່ອງທ່ຽວ ໃຫ້ມີຄຸນນະພາບ, ມີຄວາມຫຼາກຫຼາຍ, ປັບປຸງການບໍລິການ ໃຫ້ມີຄຸນນະພາບ. ປັບປຸງພື້ນຖານໂຄງລ່າງ

ສິ່ງອຳນວຍຄວາມສະດວກດ້ານຕ່າງໆ ເພື່ອຮອງຮັບນັກທ່ອງທ່ຽວ ເປັນຕົ້ນແມ່ນຢູ່ຕາມຈຸດເຊື່ອມຕໍ່ ແຕ່ລະພາກ ແລະ ຕາມເສັ້ນທາງຍຸດທະສາດ.

3.2.2. ຄົ້ນຄວ້າ,ສຳຫຼວດ ແລະ ວາງແຜນພັດທະນາກິດຈະກຳການທ່ອງທ່ຽວ ຢູ່ຕາມແຫຼ່ງທ່ອງທ່ຽວ ທີ່ໄດ້ກຳນົດໄວ້ ເພື່ອໃຫ້ແທດເໝາະກັບສະພາບການ ແລະ ສາມາດຕອບສະໜອງຕາມຄວາມຕ້ອງການ ຂອງນັກທ່ອງ ທ່ຽວ.

3.2.3. ຊຸກຍູ້ ແລະ ໂຄສະນາການທ່ອງທ່ຽວຜ່ານສື່ຕ່າງໆໃຫ້ມີຄວາມຫຼາກຫຼາຍທັງຢູ່ພາຍໃນແລະຕ່າງປະເທດ.

3.2.4. ສົມທົບກັບບັນດາແຂວງ ແລະ ພາກທຸລະກິດໃນການອອກແບບ ແລະ ຜະລິດສິ່ງພິມໂຄສະນາການທ່ອງທ່ຽວລາວ ໃຫ້ຖືກຕາມຄວາມຮຽກຮ້ອງຕ້ອງການຢ່າງພຽງພໍ.

**3.3. ເພື່ອບັນລຸຍຸດທະສາດເຊື່ອມໂຍງການທ່ອງທ່ຽວຂອງ ສປປ ລາວ ເຂົ້າກັບການທ່ອງທ່ຽວໃນລະດັບພາກພື້ນ ແລະ ສາກົນ, ປະກອບມີ 12 ແຜນງານຈຸດສຸມດັ່ງນີ້:**

3.3.1. ພັດທະນາລະບົບການເກັບກຳຂໍ້ມູນສະຖິຕິຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ, ຕາມດ່ານສາກົນໃຫ້ເປັນລະບົບທີ່ທັນສະໄໝວ່ອງໄວ, ຮັບປະກັນການເກັບກຳຂໍ້ມູນທີ່ມີຄວາມຊັດເຈນ ແລະ ລາຍງານຕົວເລກສະຖິຕິ ໃຫ້ທັນກັບສະພາບການ.

3.3.2. ສ້າງກິດຈະກຳ ແລະ ລາຍການທ່ອງທ່ຽວ ທີ່ໂດດເດັ່ນຢູ່ຕາມຈຸດເຊື່ອມຕໍ່ແຕ່ລະພາກ ແລະ ຈຸດເຊື່ອມຕໍ່ກັບປະເທດໃກ້ຄຽງ.

3.3.3. ສ້າງແຜນຍຸດທະສາດ ການຕະຫຼາດການທ່ອງທ່ຽວ ປະຈຳປີ ຂອງ ສປປ ລາວ ສົມທົບກັບຜູ້ປະກອບການທຸລະກິດການທ່ອງທ່ຽວ ໃນການສ້າງເປັນວົງຈອນທີ່ເຊື່ອມໂຍງແຫຼ່ງທ່ອງທ່ຽວ ຂອງແຕ່ລະພາກ ແລະ ໃນ ອານຸພາກພື້ນ.

3.3.4. ດຳເນີນການສຶກສາຕະຫຼາດທ່ອງທ່ຽວທັງ ພາຍໃນ ແລະ ຕ່າງປະເທດ ໃຫ້ສອດຄ່ອງກັບສະພາບ ແລະຈຸດພິເສດ ຂອງການທ່ອງທ່ຽວລາວ.

3.3.5. ພັດທະນາກິດຈະກຳສົ່ງເສີມການທ່ອງທ່ຽວ ເພື່ອຊຸກຍູ້ໃຫ້ຜູ້ປະກອບການທຸລະກິດທ່ອງທ່ຽວລາວ ສາມາດເຊື່ອມໂຍງກັບບັນດາປະເທດ ໃນອານຸພາກພື້ນ ແລະ ສາກົນ.

3.3.6. ດຳເນີນການສຳຫຼວດເກັບກຳຂໍ້ມູນ ແລະ ພັດທະນາສິ່ງອຳນວຍຄວາມສະດວກຢູ່ຈຸດເຊື່ອມຕໍ່ ແຕ່ລະພາກບົນພື້ນຖານການຕົກລົງ ຂອງກອງປະຊຸມເຊື່ອມຕໍ່ແຕ່ລະພາກ.

3.3.7. ສົມທົບກັບສະຖານເອກອັກຄະລັດຖະທູດ ແລະ ສະຖານກົງສຸນລາວ ປະຈຳຢູ່ຕ່າງປະເທດ ເພື່ອເພີ່ມ ທະວີສາຍພົວພັນ ແລະ ການຮ່ວມມື ໃນການຂະຫຍາຍຜູ້ຕາງໜ້າ, ຕົວແທນການທ່ອງທ່ຽວລາວ ຢູ່ບັນດາປະເທດທີ່ເປັນເປົ້າໝາຍ ສຳລັບການທ່ອງທ່ຽວລາວ.

3.3.8. ປັບປຸງ ແລະ ພັດທະນາຜະລິດຕະພັນການທ່ອງທ່ຽວ ຂອງ ສປປ ລາວ ໃຫ້ມີຄຸນນະພາບ, ສາມາດ ເຊື່ອມໂຍງກັບຜະລິດຕະພັນທ່ອງທ່ຽວ ຂອງປະເທດສະມາຊິກອາຊຽນ ແລະ ພາກພື້ນໄດ້.

3.3.9. ພັດທະນາ ແລະ ປັບປຸງມາດຕະຖານການທ່ອງທ່ຽວ ໃຫ້ສອດຄ່ອງກັບມາດຕະຖານອາຊຽນ ແລະສາກົນ.

3.3.10. ສົ່ງເສີມບັນດາຫົວໜ່ວຍທຸລະກິດ ໃນຂະແໜງການທ່ອງທ່ຽວ ໃຫ້ມີຄວາມເຂັ້ມແຂງສາມາດແຂ່ງຂັນ ແລະ ເຊື່ອມໂຍງເຂົ້າກັບປະຊາຄົມເສດຖະກິດ ອາຊຽນ ແລະ ສາກົນ.

3.3.11. ສົ່ງເສີມການຮ່ວມມື ດ້ານການທ່ອງທ່ຽວ ກັບບັນດາປະເທດສະມາຊິກອາຊຽນ, ອານຸພາກພື້ນແມ່ນ້ຳຂອງ, ບັນດາປະເທດໃນພາກພື້ນ ອາຊີ-ປາຊີຟິກ, ອົງການທ່ອງທ່ຽວໂລກ, ຮ່ວມມື 2 ຝ່າຍ, ຮ່ວມມື 3 ຝ່າຍ, ຫຼາຍຝ່າຍ ແລະ ອົງການຈັດຕັ້ງສາກົນໃຫ້ແໜ້ນແຟ້ນ.

3.3.12. ຊຸກຍູ້ການສ້າງວົງຈອນການທ່ອງທ່ຽວ ຂອງແຕ່ລະພາກຢູ່ພາຍໃນປະເທດ ແລະ ກັບອະນຸພາກພື້ນໂດຍການສົມທົບກັບ ຜູ້ປະກອບການທຸລະກິດທ່ອງທ່ຽວ.

**3.4. ເພື່ອບັນລຸຍຸດທະສາດໃນການພັດທະນາ, ຄຸ້ມຄອງ ແລະ ສົ່ງເສີມການທ່ອງທ່ຽວໃຫ້ກາຍເປັນຂະແໜງອັນໜຶ່ງ, ຊ່ວຍໃຫ້ປະຊາຊົນຫຼຸດພົ້ນຈາກຄວາມທຸກຍາກ ຕາມນະໂຍບາຍ ຂອງລັດຖະບານ, ປະກອບມີ 6 ແຜນງານຈຸດສຸມດັ່ງນີ້:**

3.4.1. ສົ່ງເສີມບົດບາດ ຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງປະຊາຊົນທ້ອງຖິ່ນ. ສ້າງຄວາມເຂັ້ມແຂງທາງດ້ານວິຊາການໃນວຽກງານການວາງແຜນ ແລະ ພັດທະນາການທ່ອງທ່ຽວ.

3.4.2. ພັດທະນາການທ່ອງທ່ຽວ ແບບອະນຸລັກປະຊາຊົນມີສ່ວນຮ່ວມ (CBT) ຢ່າງມີຈຸດສຸມ.

3.4.3. ພັດທະນາຜະລິດຕະພັນເຄືອຄ່າຍຜະລິດ ແລະ ສະໜອງຜະລິດຕະພັນການທ່ອງທ່ຽວ ຢ່າງມີຈຸດສຸມ (Supply Chain).

3.4.4. ສົ່ງເສີມຄວາມຮູ້ດ້ານການທ່ອງທ່ຽວ ແລະ ການປົກປັກຮັກສາຊັບພະຍາກອນທ່ອງທ່ຽວ ໃຫ້ແກ່ເຍົາວະຊົນ ແລະ ຊາວໜຸ່ມ.

3.4.5. ສົມທົບກັບບັນດາບໍລິສັດທ່ອງທ່ຽວ ແລະ ບັນດາແຂວງໃນການຈັດງານເທດສະການ, ບຸນປະເພນີ ທີ່ສຳຄັນປະຈຳທ້ອງຖິ່ນຕົນຢ່າງເປັນປົກກະຕິ ໂດຍແນ່ໃສ່ໂຄສະນາການທ່ອງທ່ຽວໃຫ້ສັງຄົມລາວໄດ້ຮັບຮູ້ ແລະ ເດີນທາງທ່ອງທ່ຽວຢູ່ ໃນ ສປປ ລາວ ນັບມື້ນັບຫຼາຍຂຶ້ນ.

3.4.6. ຈັດກິດຈະກຳສົ່ງເສີມການທ່ອງທ່ຽວ ທີ່ຕິດພັນກັບການໂຄສະນາການທ່ອງທ່ຽວ "**ລາວທ່ຽວລາວ**" ໂດຍເນັ້ນໃສ່ການທ່ອງທ່ຽວ ທາງດ້ານທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ ເພື່ອດຶງດູດກຸ່ມຕະຫຼາດທ່ອງທ່ຽວພາຍໃນ.

**3.5. ເພື່ອບັນລຸຍຸດທະສາດໃນການພັດທະນາບຸກຄະລາກອນໃນຂະແໜງການທ່ອງທ່ຽວ ໃຫ້ມີຄຸນນະພາບ, ສາມາດຕອບສະໜອງການບໍລິການທີ່ປະທັບໃຈແກ່ນັກທ່ອງທ່ຽວ ແລະ ສາມາດເຊື່ອມໂຍງກັບສາກົນ ເທື່ອລະກ້າວ, ປະກອບມີ 3 ແຜນງານຈຸດສຸມ ດັ່ງນີ້:**

3.5.1. ສ້າງຄວາມເຂັ້ມແຂງ ດ້ານວິຊາການໃນວຽກງານການວາງແຜນ ແລະ ພັດທະນາການທ່ອງທ່ຽວ.

3.5.2. ຍົກລະດັບຂີດຄວາມສາມາດ ແລະ ການປະສານງານຂອງພາກກ່ຽວຂ້ອງ ຂອງພາກລັດ ແລະ ເອກະຊົນໃນການອະນຸລັກຊັບພະຍາກອນດ້ານການທ່ອງທ່ຽວ.

3.5.3. ຍົກລະດັບຄວາມສາມາດ ຂອງບຸກຄະລາກອນ ໃນການເກັບກຳຂໍ້ມູນສະຖິຕິ ໃນຂອບເຂດທົ່ວປະເທດ.

**3.6. ເພື່ອບັນລຸຍຸດທະສາດ ໃນການພັດທະນາຜະລິດຕະພັນການທ່ອງທ່ຽວ ໜຶ່ງເມືອງໜຶ່ງຜະລິດຕະພັນໃນທົ່ວປະເທດ ແລະ ພັດທະນາສິ່ງອຳນວຍຄວາມສະດວກ ຢູ່ຈຸດເຊື່ອມຕໍ່ແຕ່ລະພາກ, ປະກອບມີ 2 ແຜນງານຈຸດສຸມ ດັ່ງນີ້:**

3.6.1. ກຳນົດ ແລະ ສົ່ງເສີມຜະລິດຕະພັນການທ່ອງທ່ຽວ ໜຶ່ງເມືອງໜຶ່ງຜະລິດຕະພັນຂອງແຕ່ລະແຂວງ ຢ່າງ ມີຈຸດສຸມ,ມີຄຸນນະພາບ ແລະ ຄົບວົງຈອນສາມາດຕອບສະໜອງຄວາມຕ້ອງການຂອງຕະຫຼາດການທ່ອງທ່ຽວ.

3.6.2. ພັດທະນາຜະລິດຕະພັນການທ່ອງທ່ຽວ ໃຫ້ມີຄວາມຫຼາກຫຼາຍ, ສ້າງມູນຄ່າເພີ່ມໃຫ້ແກ່ຜະລິດຕະພັນການທ່ອງທ່ຽວບົນພື້ນຖານທ່າແຮງ ແລະ ເອກະລັກຂອງທ້ອງຖິ່ນ ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດການທ່ອງທ່ຽວ.

**3.7. ເພື່ອບັນລຸຍຸດທະສາດໃນການສ້າງແຜນພັດທະນາແຫຼ່ງທ່ອງທ່ຽວ,ສຳຫຼວດ,ຈັດສັນແຫຼ່ງທ່ອງທ່ຽວ, ປັບ ປຸງ ແລະ ພັດທະນາສະຖານທີ່ທ່ອງທ່ຽວ ທີ່ມີການບໍລິການແບບຄົບວົງຈອນ ແລະ ມີຄຸນນະພາບ,ປະກອບມີ 4 ແຜນ ງານຈຸດສຸມ ດັ່ງນີ້:**

3.7.1. ດຳເນີນການສຳຫຼວດເກັບກຳຂໍ້ມູນ ແລະ ພັດທະນາສິ່ງອຳນວຍຄວາມສະດວກ ຢູ່ຈຸດເຊື່ອມຕໍ່ແຕ່ລະພາກ ບົນພື້ນຖານການຕົກລົງ ຂອງກອງປະຊຸມເຊື່ອມຕໍ່ແຕ່ລະພາກ.

3.7.2. ສ້າງແຜນພັດທະນາແຫຼ່ງທ່ອງທ່ຽວ ທີ່ເປັນບູລິມະສິດ ຂອງແຕ່ລະແຂວງ ໃນຂອບເຂດທົ່ວປະເທດ.
ສຶກສາຄົ້ນຄວ້າຄວາມເປັນໄປໄດ້ ແລະ ທ່າແຮງໃນການພັດທະນາແຫຼ່ງທ່ອງທ່ຽວ ເພື່ອການກຳນົດ ເງື່ອນໄຂ ມາດຕະຖານ ໃນການຈັດລະດັບແຫຼ່ງທ່ອງທ່ຽວ.

3.7.3. ສົມທົບກັບບັນດາແຂວງ ຈັດບູລິມະສິດພັດທະນາແຫຼ່ງທ່ອງທ່ຽວ ເພື່ອລົງສຳຫຼວດເກັບກຳຂໍ້ມູນ ແລະ ສ້າງແຜນພັດທະນາແຫຼ່ງທ່ອງທ່ຽວດັ່ງກ່າວ.

**3.8. ເພື່ອບັນລຸຍຸດທະສາດ ໃນການກໍ່ສ້າງສິ່ງອຳນວຍຄວາມສະດວກ ໃນແຫຼ່ງທ່ອງທ່ຽວ, ປັກຫຼັກໝາຍຂອບເຂດແຫຼ່ງທ່ອງທ່ຽວໃນທົ່ວປະເທດ ແລະ ສ້າງຫ້ອງຂໍ້ມູນຂ່າວສານການທ່ອງທ່ຽວ ພ້ອມທັງປະກອບອຸປະກອນສື່ສານ ໃຫ້ເປັນລະບົບຢູ່ ແຕ່ລະດ່ານສາກົນ, ປະກອບມີ 2 ແຜນງານຈຸດສຸມ ດັ່ງນີ້:**

3.8.1. ກໍ່ສ້າງ ແລະ ປັບປຸງສິ່ງອຳນວຍຄວາມສະດວກ ໃນແຫຼ່ງທ່ອງທ່ຽວໃຫ້ມີມາດຕະຖານ, ກົມກືນກັບສະພາບແວດລ້ອມ ແລະ ຮັກສາເອກະລັກ ຂອງທ້ອງຖິ່ນ.

4.8.2. ສົມທົບກັບອຳນາດການປົກຄອງທ້ອງຖິ່ນ ເພື່ອກຳນົດຂອບເຂດ ແລະ ປັກຫຼັກໝາຍແຫຼ່ງທ່ອງທ່ຽວ ທີ່ຊັດເຈນ.

**3.9. ເພື່ອບັນລຸຍຸດທະສາດໃນການສ້າງ, ປັບປຸງບັນດານິຕິກຳ, ມາດຕະຖານການທ່ອງທ່ຽວ ແລະ ເຜີຍແຜ່ ບັນດານິຕິກຳຂະແໜງການທ່ອງທ່ຽວ ໃຫ້ໄດ້ໃນຂອບເຂດທົ່ວປະເທດ, ປະກອບມີ 3 ແຜນງານຈຸດສຸມ ດັ່ງນີ້:**

3.9.1. ສ້າງລະບຽບການ, ມາດຕະຖານການທ່ອງທ່ຽວ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ ພາຍໃນປະເທດ ແລະ ລະດັບອາຊຽນ.

3.9.2. ດຳເນີນການສຶກສາ, ຄົ້ນຄວ້າ ແລະ ຮ່າງນິຕິກຳໃນການສ້າງຕັ້ງບັນດາຫົວໜ່ວຍທຸລະກິດ ບໍລິການນຳທ່ຽວ, ສະຖານທີ່ທ່ອງທ່ຽວ, ສະຖານທີ່ພັກແຮມ, ພັດຕະຄານ, ຮ້ານອາຫານ, ສວນອາຫານ, ຮ້ານກິນດື່ມ ແລະ ສະຖານບັນເທີງ ຂອງ ສປປ ລາວ.

3.9.3. ສ້າງ ແລະ ປັບປຸງບັນດານິຕິກຳ ໃນຂະແໜງທ່ອງທ່ຽວ ໃຫ້ແທດເໝາະກັບສະພາບຄວາມເປັນຈິງ ຂອງການຂະຫຍາຍຕົວທາງດ້ານເສດຖະກິດ, ວັດທະນະທຳ-ສັງຄົມ ຂອງ ສປປ ລາວ, ອະນຸພາກພື້ນ ແລະ ສາກົນ.

**3.10. ເພື່ອບັນລຸຍຸດທະສາດສົ່ງເສີມ ໃຫ້ມີການລົງທຶນໃນຂະແໜງການທ່ອງທ່ຽວ ແລະ ຄຸ້ມຄອງການລົງທຶນໃຫ້ແທດເໝາະກັບການຂະຫຍາຍຕົວ ຂອງເສດຖະກິດ-ສັງຄົມ ໃນຂອບເຂດທົ່ວປະເທດ, ປະກອບມີ 2 ແຜນງານຈຸດສຸມດັ່ງນີ້ :**

3.10.1. ເປີດກວ້າງ ແລະ ສົ່ງເສີມການລົງທຶນທັງພາຍໃນ ແລະ ຕ່າງປະເທດໃນຮູບແບບ ການລົງທຶນຂອງພາກລັດ ແລະ ພາກເອກະຊົນ ໃນຂະແໜງການທ່ອງທ່ຽວ ບົນພື້ນຖານແຜນພັດທະນາ ຂອງ ສປປ ລາວ.

3.10.2. ພັດທະນາລະບົບຖານຂໍ້ມູນການລົງທຶນພາຍໃນ ແລະ ຕ່າງປະເທດ ໃນຂະແໜງທ່ອງທ່ຽວ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ.

**3.11. ເພື່ອບັນລຸຍຸດທະສາດໃນການຈັດລະດັບມາດຕະຖານ ແລະ ປະເພດ ໃຫ້ບັນດາຫົວໜ່ວຍທຸລະກິດ ການບໍລິການໃນຂະແໜງການທ່ອງທ່ຽວ ໃຫ້ໄດ້ໃນຂອບເຂດທົ່ວປະເທດ, ປະກອບມີ 1 ແຜນງານຈຸດສຸມ ດັ່ງນີ້:**

3.11.1. ຄຸ້ມຄອງ, ຕິດຕາມ, ກວດກາ, ປັບປຸງ ແລະ ຈັດລະດັບມາດຕະຖານ ຜະລິດຕະພັນການທ່ອງທ່ຽວ ແລະ ການບໍລິການ, ກິດຈະການທຸລະກິດໃນຂະແໜງການທ່ອງທ່ຽວເຊັ່ນ: ທຸລະກິດນຳທ່ຽວ, ທຸລະກິດພັກແຮມ , ທຸລະກິດພັດຕະຄານ, ຮ້ານອາຫານ, ສວນອາຫານ, ຮ້ານກິນດື່ມ, ສະຖານບັນເທີງ, ສະຖານທີ່ທ່ອງທ່ຽວ ແລະ ອື່ນໆ.

**3.12. ເພື່ອບັນລຸຍຸດທະສາດເຮັດໃຫ້ການຄຸ້ມຄອງ ບັນດາກິດຈະການທຸລະກິດທ່ອງທ່ຽວ ແລະ ການບໍລິການໃນຂະແໜງການທ່ອງທ່ຽວແທດເໝາະກັບສະພາບການ ຂະຫຍາຍຕົວຂອງການທ່ອງທ່ຽວ, ສະກັດກັ້ນປະກົດການຫຍໍ້ທໍ້ ແລະ ຜົນກະທົບທາງລົບທີ່ອາດຈະເກີດຂຶ້ນໃນຂະແໜງການທ່ອງທ່ຽວ ໃນຂອບເຂດທົ່ວປະເທດ, ປະກອບມີ 2 ແຜນງານຈຸດສຸມ ດັ່ງນີ້:**

3.12.1. ຄຸ້ມຄອງ ແລະ ກວດກາບັນດາຫົວໜ່ວຍທຸລະກິດນຳທ່ຽວ ໃຫ້ມີການເຄື່ອນໄຫວຢ່າງມີປະສິດທິ ພາບ ເພື່ອຈັດປະເພດບໍລິການນຳທ່ຽວ.

3.12.2. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຄຸ້ມຄອງກິດຈະການທຸລະກິດໃນຂະແໜງການທ່ອງທ່ຽວໃຫ້ຖືກຕ້ອງຕາມລະບຽບກົດໝາຍ.

**3.13. ເພື່ອບັນລຸຍຸດທະສາດ ພັດທະນາຊັບພະຍາກອນມະນຸດ ໃນຂະແໜງທ່ອງທ່ຽວ ໃຫ້ມີຄວາມສາມາດ, ປັບປຸງຫຼັກສູດການຮຽນ-ການສອນ ໃຫ້ເຊື່ອມໂຍງກັບສາກົນເທື່ອລະກ້າວ, ສ້າງເຄືອຄ່າຍການປະສານງານພາກລັດ, ເອກະ**

**ຊົນ, ສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນການສຶກສາ ໃນຂະແໜງການທ່ອງທ່ຽວ, ປະກອບມີ 9 ແຜນງານຈຸດສຸມຄືດັ່ງນີ້:**

3.13.1. ຍົກລະດັບຂີດຄວາມສາມາດຂອງບຸກຄະລະກອນ ໃນຂະແໜງການທ່ອງທ່ຽວ ໄລຍະສັ້ນ ແລະ ໄລຍະຍາວໃຫ້ມີປະສິດທິພາບ ແລະ ສາມາດເຊື່ອມໂຍງກັບສາກົນເທື່ອລະກ້າວ.

3.13.2. ພັດທະນາ ແລະ ປັບປຸງຫຼັກສູດການຮຽນ-ການສອນ ສໍາລັບວິທະຍາໄລ ແລະ ມະຫາວິທະຍາໄລ ໃຫ້ມີປະສິດທິພາບ ແລະ ສາມາດເຊື່ອມໂຍງກັບສາກົນເທື່ອລະກ້າວ.

3.13.3. ພັດທະນາ ແລະ ປັບປຸງຫຼັກສູດການຝຶກອົບຮົມໃນຂະແໜງການທ່ອງທ່ຽວ ໄລຍະສັ້ນ ແລະ ໄລຍະຍາວໃຫ້ມີປະສິດທິພາບ.

3.13.4. ຊຸກຍູ້ການຈັດຕັ້ງປະຕິບັດສັນຍາຮັບຮູ້ເຊິ່ງກັນ ແລະ ກັນກ່ຽວກັບວິຊາຊີບການທ່ອງທ່ຽວອາຊຽນ ໃຫ້ປະກົດຜົນເປັນຈິງ.

3.13.5. ພັດທະນາຂີດຄວາມສາມາດ ຂອງພະນັກງານໃນຂະແໜງການທ່ອງທ່ຽວ ໃຫ້ມີຄວາມພ້ອມ ໃນການຈັດງານປີທ່ອງທ່ຽວລາວ ຄັ້ງທີ 3 ປີ 2017.

3.13.6. ສ້າງຄວາມເຂັ້ມແຂງ ໃຫ້ແກ່ສະຖາບັນການສຶກສາໃນຂະແໜງການທ່ອງທ່ຽວ ພ້ອມທັງປັບປຸງລະບົບການຄຸ້ມຄອງບໍລິຫານ ແລະ ການຮຽນ-ການສອນ ໃຫ້ມີຄຸນະພາບ.

3.13.7. ການພັດທະນາລະບົບການພັດທະນາຊັບພະຍາກອນມະນຸດ ໃນຂະແໜງການທ່ອງທ່ຽວໃຫ້ມີປະສິດທິພາບສູງ ສາມາດເຊື່ອມໂຍງກັບສາກົນເທື່ອລະກ້າວ.

3.13.8. ສ້າງເຄືອຄ່າຍປະສານງານ ລະຫວ່າງ ພາກລັດ ແລະ ເອກະຊົນ, ພາຍໃນ ແລະ ຕ່າງປະເທດໃຫ້ກ້ວາງຂວາງ ເຮັດໃຫ້ການພັດທະນາບຸກຄະລາກອນສອດຄ່ອງກັບຄວາມຕ້ອງການຕົວຈິງຂອງວຽກງານທ່ອງທ່ຽວ ໃນແຕ່ລະໄລຍະ.

3.13.9. ເສີມຂະຫຍາຍການຮ່ວມມື ກັບອົງການຈັດຕັ້ງສາກົນ ໃນການພັດທະນາບຸກຄະລາກອນ ໃນຂະແໜງການທ່ອງທ່ຽວ.

**4. <u>ວຽກງານເສນາທິການ</u>:**

**ຄາດຄະເນ ວຽກງານເສນາທິການ ແຕ່ປີ 2016-2025 ປະກອບມີ 15 ແຜນງານຈຸດສຸມ.**

**4.1. ເພື່ອບັນລຸຍຸດທະສາດໃນການປັບປຸງ ແລະ ພັດທະນາການຄຸ້ມຄອງວຽກງານບໍລິຫານ ຂອງກະຊວງ ຖວທ ໃຫ້ເປັນລະບົບ, ປະກອບມີ 5 ແຜນງານຈຸດສຸມດັ່ງນີ້:**

4.1.1. ຍົກສູງສະຕິທາງດ້ານການເມືອງແນວຄິດ ແລະ ທັດສະດີ, ກໍ່ສ້າງ ແລະບຳລຸງຍົກລະດັບຄວາມຮູ້, ຄວາມສາມາດ ຂອງພະນັກງານບໍລິຫານ ແລະ ຄຸ້ມຄອງຫ້ອງການໃຫ້ສົມຄູ່ກັບຄວາມຕ້ອງການ ຂອງວຽກງານ.

4.1.2. ປັບປຸງກົນໄກການບໍລິຫານ ແລະ ຄຸ້ມຄອງໃນດ້ານລະບຽບ, ແບບແຜນວິທີເຮັດວຽກ, ການພົວພັນປະສານງານໃຫ້ມີຄວາມກົມກຽວ, ວ່ອງໄວ ແລະ ທັນສະໄໝ, ປັບປຸງ ລະບົບຂໍ້ມູນຂ່າວສານ IT (ລະບົບເຄືອຄ່າຍແນັດເວີກ Network) ແລະ ພື້ນຖານໂຄງລ່າງ ໃຫ້ແທດເໝາະກັບຄວາມຕ້ອງການ ແລະ ຍົກສູງຄຸນນະພາບຂອງວຽກງານຄຸ້ມຄອງບໍລິຫານ ຂະແໜງ ຖວທ.

4.1.3. ສົ່ງເສີມການພົວພັນຮ່ວມມື ກັບປະເທດເພື່ອນມິດຍຸດທະສາດ, ການເຊື່ອມໂຍງກັບອານຸພາກພື້ນ ແລະ ສາກົນ.

4.1.4. ສົ່ງເສີມຄວາມກ້າວໜ້າ ຂອງແມ່ຍິງທົ່ວກະຊວງ, ໂຄສະນາ ແລະ ເຜີຍແຜ່ຄວາມເຂົ້າໃຈບົດບາດ ຍິງ-ຊາຍ ໃນຂົງເຂດວຽກງານ ຖວທ ໃຫ້ເລິກເຊິ່ງ ແລະ ກວ້າງຂວາງ.

4.1.5. ສ້າງກິດຈະກຳເພື່ອເຕົ້າໂຮມຄວາມສາມັກຄີ ຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຂະແໜງການອື່ນໆ.

**4.2. ເພື່ອບັນລຸຍຸດທະສາດປັບປຸງກົງຈັກການຈັດຕັ້ງ ຂອງກະຊວງໃຫ້ມີຄວາມເຂັ້ມແຂງ ແລະ ເປັນລະບົບ, ປະກອບມີ 1 ແຜນງານຈຸດສຸມດັ່ງນີ້:**

4.2.1. ປັບປຸງກົງຈັກການຈັດຕັ້ງຂອງຂະແໜງການ ຖວທ ຢູ່ສູນກາງ ແລະ ທ້ອງຖິ່ນໃຫ້ມີຄວາມເຂັ້ມແຂງ ແລະ ເປັນລະບົບ.

**4.3. ເພື່ອບັນລຸຍຸດທະສາດໃນການກໍ່ສ້າງ ແລະ ພັດທະນາບຸກຄະລາກອນໃຫ້ມີຄວາມເຂັ້ມແຂງ ທາງດ້ານຄຸນສົມບັດ ແລະ ຄວາມສາມາດ, ປະກອບມີ 2 ແຜນງານຈຸດສຸມດັ່ງນີ້:**

4.3.1. ຍົກສູງການຄຸ້ມຄອງ ແລະ ປັບປຸງວຽກພັກ ແລະ ອົງການຈັດຕັ້ງມະຫາຊົນ ໃຫ້ມີຄວາມເຂັ້ມແຂງ.

4.3.2. ຍົກລະດັບ ແລະ ປະຕິບັດນະໂຍບາຍຕໍ່ພະນັກງານລັດຖະກອນ ຂອງຂະແໜງການ ຖວທ.

**4.4. ເພື່ອບັນລຸຍຸດທະສາດ ດຶງດູດການລົງທຶນ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດແຜນພັດທະນາ ໃນທົ່ວຂະ ແໜງການ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃຫ້ມີປະສິດທິຜົນ ແລະ ຖືກຕ້ອງຕາມລະບຽບກົດໝາຍ, ປະກອບມີ 5 ແຜນງານຈຸດສຸມດັ່ງນີ້:**

4.4.1. ສ້າງແຜນຍຸດທະສາດພັດທະນາວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ 2021-2030.

4.4.2. ສຶກສາຄົ້ນຄ້ວາ ລະດົມທຶນຈາກພາຍໃນ ແລະ ຕ່າງປະເທດ ເຂົ້າໃນການພັດທະນາວຽກງານ ຖວທ ຢ່າງຈຸດສຸມ.

4.4.3. ພັດທະນາບຸກຄະລາກອນ ດ້ານການວາງແຜນ, ສະຖິຕິ,ການເງິນ ແລະ ການບັນຊີໃຫ້ມີຄວາມເຂັ້ມແຂງ ທັງປະລິມານ ແລະ ຄຸນນະພາບ.

4.4.4. ພັດທະນາ ແລະ ປັບປຸງລະບົບຂໍ້ມູນຂ່າວສານ ແລະ ຂອດປະສານງານກ່ຽວກັບວຽກແຜນການ-ການເງິນ ກັບແຕ່ລະກົມກອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄວາມວ່ອງໄວ ແລະ ເປັນລະບົບ.

4.4.5. ຕິດຕາມ, ປະເມີນຜົນ ການຈັດຕັ້ງປະຕິບັດແຜນງານ ແລະ ໂຄງການພັດທະນາວຽກງານ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃນທົ່ວປະເທດ.

4.4.6. ພັດທະນາ ແລະ ປັບປຸງການເກັບກຳ, ສັງລວມ, ວິໃຈ ຂໍ້ມູນສະຖິຕິ ໃຫ້ເປັນລະບົບ.

**4.5. ເພື່ອບັນລຸຍຸດທະສາດເປີດກວ້າງການຮ່ວມມື, ແລກປ່ຽນ ແລະ ເຊື່ອມໂຍງກັບສາກົນ ໃນວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ປະກອບມີ 1 ແຜນງານຈຸດສຸມ ມີດັ່ງນີ້:**

4.5.1. ເປີດກວ້າງການຮ່ວມມືແລກປ່ຽນບົດຮຽນ ສອງຝ່າຍ, ຫຼາຍຝ່າຍ ແລະ ເຊື່ອມໂຍງກັບສາກົນໃນວຽກງານ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໂດຍຍຶດໝັ້ນຫຼັກການຮ່ວມມືຕ່າງຝ່າຍຕ່າງມີຜົນປະໂຫຍດ.

**4.6. ເພື່ອບັນລຸຍຸດທະສາດໃນການຕິດຕາມ, ກວດກາ, ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານ ຂອງຂະແໜງ ຖວທ ໃຫ້ເປັນລະບົບ, ຖືກຕ້ອງຕາມລະບຽບກົດໝາຍ ແລະ ຂໍ້ກຳນົດຕ່າງໆ, ປະກອບມີ 1 ແຜນງານຈຸດສຸມມີດັ່ງນີ້:**

4.6.1. ຕິດຕາມ, ກວດກາຊຸກຍູ້ການຈັດຕັ້ງປະຕິບັດ ວຽກງານຂອງຂະແໜງ ຖວທ ໃຫ້ເປັນລະບົບ, ຖືກຕ້ອງ ຕາມລະບຽບກົດໝາຍ.